## ບົດຮຽນໂຮງຮຽນວັນອາທິດ

ວັນອາທິດ ທີ 25 ສິງຫາ 2024 (08-25-2024)

---

## ບາຣຸກ

**ຈຸດສຳຄັນໃນບົດຮຽນ:** ພຣະເຈົ້າຈະຕອບແທນການຮັບໃຊ້ສັດຊື່ຂອງທ່ານ.

**ພຣະຄັມພີຕອບສນອງຕໍ່ຊີວິດ:**

ເມື່ອຂ້າພະເຈົ້າໄດ້ເລີ່ມຕົ້ນເປັນສິດຍາພິບານຂອງຄຣິສຕະຈັກຂອງພວກເຮົາ, ອາຄານໄດ້ຖືກສ້າງໃໝ່ຫຼັງຈາກໄຟໄໝ້. ເມື່ອສຳເລັດການກໍ່ສ້າງຄືນໃໝ່, ຄຳຖາມທີ່ສຳຄັນແມ່ນ: "ແມ່ນໃຜແດ່ຈະຖືກະແຈເຂົ້າໄປໂບດໃໝ່?" ຊື່ນຶ່ງແມ່ນເຫັນໄດ້ຊັດເຈນ-ດໍຣໍຕີ ເອີສະຣີ (Dorothy Ursery). ນາງບໍ່ໄດ້ເປັນຜູ້ນຳທາງການ ຫຼື ຄູສອນ, ແຕ່ນາງໄດ້ໄປຮອດໂບດຢ່າງສັດຊື່ຢ່າງໜ້ອຍນຶ່ງຊົ່ວໂມງກ່ອນໂບດເລີ່ມ. ນາງພຽງແຕ່ນັ່ງຢູ່ໃນລົດຂອງນາງກັບແມ່ ແພັດເຕີເຊີນ (Patterson), ຜູ້ທີ່ນາງໄດ້ໄປຮັບແລະນຳໄປໂບດ. ດໍຣໍຕີ ມີຄວາມສັດຊື່, ແລະດັ່ງນັ້ນນາງໄດ້ຖືກມອບກະແຈໃຫ້ເພື່ອເປີດປະຕູຂອງໂບດ. ຈາກນັ້ນນາງໄດ້ເລີ່ມທຳຄວາມສະອາດໂບດ, ແລະ ນາງກໍສັດຊື່ໃນເຣື່ອງນັ້ນ. ບົດເພງນະມັສການທີ່ນາງມັກຮ້ອງແມ່ນ “ແມ່ນແລ້ວ, ພຣະເຈົ້າຊົງເປັນຈິງ,” ແລະເຫັນໄດ້ຢ່າງຈະແຈ້ງຕໍ່ທຸກຄົນທີ່ຮູ້ຈັກນາງວ່າພຣະເຈົ້າຊົງມີຈິງໃນຊີວິດຂອງນາງ. ເມື່ອນາງໄດ້ເສັຽຊີວິດໄປ, ນາງມີຄຳຮ້ອງຂໍພຽງອັນດຽວເທົ່ານັ້ນ-ງານສົບໃນວັນອາທິດ, ແລະ ເຖິງແມ່ນວ່າພວກເຮົາຈະບໍ່ມີພິທີສົບໃນວັນອາທິດ, ແຕ່ພວກເຮົາກໍເຮັດເພື່ອນາງເພາະຄວາມສັດຊື່ຂອງນາງ. <u>ຄວາມສັດຊື່ແມ່ນສິ່ງທີ່ພຣະເຈົ້າກຳລັງຊອກຫາ, ເຖິງແມ່ນວ່າໃນສິ່ງເລັກນ້ອຍເຊັ່ນການຕົງເວລາ. ຄວາມສັດຊື່ຈະເລີນເຕີບໂຕ. ຄວາມສັດຊື່ສ້າງການເຊື່ອຟັງໃຫ້ໃຫຍ່ຂຶ້ນ.</u> ເມື່ອເຮົາສັດຊື່, ໃຫ້ເຮົາມາເບິ່ງວ່າເຮົາຈະໄດ້ຮັບຂໍກະແຈທີ່ພຣະຜູ້ເປັນເຈົ້າປະສົງໃຫ້ເຮົາມີ. ແລະ ເມື່ອເຮົາເຊື່ອຟັງ, ພຣະຜູ້ເປັນເຈົ້າຈະເປີດປະຕູໃຫ້ເຮົາຫຼາຍຂຶ້ນ.

*ທ່ານເຫັນໃຜເປັນວິລະຊົນທີ່ບໍ່ມີຊື່ສຽງໃນໂບດຫຼືຊຸມຊົນຂອງພວກເຮົາ?*

**ພຣະຄັມພີກ່າວວ່າຢ່າງໃດ?** (ເບິ່ງຕາມຫົວຂໍ້ 1, 2, ແລະ 3,)

### <u>ສຶກສາພຣະຄັມພີ</u>

1. **ເຢເຣມີຢາ 36:4-8.**

*4. ດັ່ງນັ້ນເຢເຣມີຢາຈຶ່ງໃຫ້ບາຣຸກລູກຊາຍເນຣີຢາຂຽນທຸກໆສິ່ງທີ່ພຣະຜູ້ເປັນເຈົ້າຊົງບອກລົງໃນເຈັຍນັ້ນ. 5. ເຢເຣມີຢາໄດ້ບອກບາ-*
*ຣຸກວ່າ, 6. “ຂ້າພະເຈົ້ານັ້ນຖືກຫ້າມບໍ່ໃຫ້ໄປວິຫານອີກຕໍ່ໄປສະນັ້ນຂ້າພະເຈົ້າຈຶ່ງຢາກໃຫ້ທ່ານໄປທີ່ນັ້ນໃນມື້ທີ່ປະຊາຊົນຖືສິນອົດອາ-*
*ຫານ ແລ້ວຈົ່ງອ່ານໜັງສືມ້ວນທີ່ທ່ານໄດ້ຂຽນຕາມຄຳບອກຂອງຂ້າພະເຈົ້າໃຫ້ປະຊາຊົນຟັງ ຮ່ວມທັງປະຊາຊົນທີ່ມາຈາກຫົວເມືອງ*
*ຕ່າງໆດ້ວຍ ເພື່ອໃຫ້ພວກເຂົາໄດ້ຍິນທຸກສິ່ງທີ່ພຣະຜູ້ເປັນເຈົ້າໄດ້ຊົງບອກຂ້າພະເຈົ້າ. 7. ແລ້ວພວກເຂົາອາດຈະອ້ອນວອນຕໍ່ພຣະຜູ້*
*ເປັນເຈົ້າແລະຫລີກໜີຈາກທາງຊົ່ວກໍໄດ້ ເພາະວ່າພຣະຜູ້ເປັນເຈົ້າໄດ້ຊົງຂົ່ມຂູ່ປະຊາຊົນນີ້ດ້ວຍພຣະພິໂລດຢ່າງຮຸນແຮງ.” 8. ດັ່ງນັ້ນ*
*ບາຣຸກຈຶ່ງເຮັດຕາມເຢເຣມີຢາບອກຄື ລາວໄດ້ອ່ານພຣະຄຳຂອງພຣະຜູ້ເປັນເຈົ້າໃນພຣະວິຫານຢ່າງຖືກຕ້ອງ.*

ບາຣຸກຢູ່ໃນຈຸດທີ່ທີ່ລຳບາກ; ລາວໄດ້ຖືກຮຽກຮ້ອງໃຫ້ເທສນາໃນທ້າຍອາທິດແທນຜູ້ປະກາດພຣະທັມທີ່ຍິ່ງໃຫຍ່, ເຢເຣມີຢາ, ຜູ້ປະກາດພຣະທັມທີ່ໄດ້ຖືກຫ້າມເຂົ້າອອກຈາກພຣະວິຫານຢ່າງໜ້ອຍສອງຄັ້ງໃນອະດີດ (ເຢເຣມີຢາ 7:1-15; 26:1-19). ຄຳສອນຂອງເຢເຣມີຢາແມ່ນການລົງໂທດແລະຄວາມໂສກເສົ້າບໍ່ໄດ້ເຂົ້າກັນກັບຜູ້ນຳທາງສາສນາແລະທາງດ້ານການເມືອງ. ເຖິງຢ່າງໃດກໍຕາມ, ພຣະເຈົ້າໄດ້ເອີ້ນເຢເຣມີຢາກ່ອນທີ່ເພິ່ນຈະເກີດມາເພື່ອເປັນຜູ້ປະກາດພຣະທັມຂອງປະຊາຊາດ (1:5). ພຣະເຈົ້າໄດ້ມອບວຽກງານໃຫ້ລາວໃນການຖອນຮາກແລະຈີກມ້າງລົງ, ທຳລາຍແລະຮື້ຖອນຖິ້ມ, ການກໍ່ສ້າງແລະການປູກ (ຂໍ້ 10). ເຖິງແມ່ນວ່າຄຳສິດສອນຂອງລາວແມ່ນຍາກທີ່ຈະຍອມຮັບ, ແຕ່ການຕອບຮັບທີ່ເໝາະສົມຈະນຳການປິ່ນປົວມາໃຫ້. ສິ່ງນີ້ໄດ້ເປັນພຍານແລ້ວໃນສມັຍຂອງໂຢຊີຢາ

ເມື່ອການຟື້ນຟູໄດ້ຢຸດການພິພາກສາຂອງພຣະເຈົ້າສູ່ຊາວຢູດາ. ບັດນີ້, ພຣະເຈົ້າໄດ້ປະທານຂ່າວສານອີກອັນນຶ່ງໃຫ້ແກ່ເຢເຣມີຢາເພື່ອໃຫ້ແກ່ລູກຫຼານຂອງຢູດາ (36:2). ພຣະຜູ້ເປັນເຈົ້າໄດ້ຫວັງວ່າຖ້າພວກເຂົາໄດ້ຍິນສິ່ງທີ່ກໍາລັງຈະເກີດຂຶ້ນ, ພວກເຂົາອາດຈະກັບໃຈຈາກບາບຂອງພວກເຂົາແລະພຣະເຈົ້າກໍຈະໃຫ້ອະພັຍພວກເຂົາ (ຂໍ້ 3). ເຢເຣມີຢາຕ້ອງການເພື່ອນຮ່ວມງານເພື່ອຂຽນຂໍ້ຄວາມແລະສົ່ງຂໍ້ຄວາມນັ້ນ. ລາວໄດ້ຮຽກຮ້ອງໃຫ້ບາຣຸກ, ຜູ້ທີ່ໄດ້ມາແລະຂຽນຂໍ້ຄວາມທີ່ສົມບູນ (ຂໍ້ 4). ແຕ່ເຢເຣມີຢາຕ້ອງການຫຼາຍກ່ວານັກຂຽນ; ລາວຕ້ອງການໂຄສົກ, ນັກເທດທີ່ຈັດໄວ້, ຕົວແທນຜູ້ປະກາດພຣະທັມ. ເຢເຣມີຢາແບ່ງປັນຄວາມຫຍຸ້ງຍາກຂອງລາວກັບບາຣຸກ (ຂໍ້ 5). ຄໍາແນະນໍາທີ່ຈະແຈ້ງໃຫ້ບາຣຸກກ່ຽວກັບສິ່ງທີ່ຈະເຮັດ (ໄປແລະອ່ານຈາກໜັງສືມ້ວນ), ບ່ອນທີ່ຈະເຮັດ (ທີ່ພຣະວິຫານ), ແລະກັບໃຜທີ່ຈະແບ່ງປັນມັນ (ຊາວຢູດາທັງໝົດທີ່ມາຈາກເມືອງຂອງເຂົາເຈົ້າ). ເຢເຣມີຢາເຖິງແມ່ນວ່າໄດ້ແບ່ງປັນການຕອບສນອງທີ່ຕ້ອງການ: ວ່າແຕ່ລະຄົນຈະໄດ້ຍິນຂ່າວສານ, ຫັນຈາກທາງຊົ່ວຮ້າຍຂອງເຂົາເຈົ້າ, ແລະອະທິຖານຫາພຣະເຈົ້າ (ຂໍ້ 7). ບາຣຸກປະຕິບັດທຸກສິ່ງຢ່າງສັດຊື່ທີ່ເຢເຣມີຢາໄດ້ຂໍຈາກລາວ (ຂໍ້ 8). ລາວແທນເຢເຣມີຢາຢ່າງສັດຊື່ແລະໄດ້ເປັນຕົວແທນຂອງພຣະຜູ້ເປັນເຈົ້າຕໍ່ໜ້າຝູງຊົນ. ຊາວຢູດາຢູ່ໃນຈຸດທີ່ຍາກລໍາບາກກວ່າທີ່ເຮົາຈະນຶກພາບໄດ້. ເຫດການນີ້ຖືກຍຶດຄອງໃນປີ 605 ກ່ອນຄ.ສ, ແລະເຂົາເຈົ້າຢູ່ຫ່າງບໍ່ຫຼາຍເດືອນຈາກການບຸກໂຈມຕີຂອງເນບູກາດເນດຊາ, ກະສັດບາບີໂລນ. ເຖິງແມ່ນວ່າການຮີບດ່ວນໄດ້ຖືກເອີ້ນເຕືອນ (ຂໍ້ 9), ພວກເຮົາບໍ່ໄດ້ອ່ານສິ່ງທີ່ພວກເຂົາຕອບຮັບຕໍ່ຂໍ້ຄວາມຂອງບາຣຸກ. ພວກເຂົາໄດ້ຍິນຂໍ້ຄວາມຈາກນັກເທດຕົວແທນບໍ່? ພວກເຂົາໄດ້ໃສ່ໃຈການເຕືອນແລະກັບໃຈບໍ່? ທ່ານຈະໂຕ້ຕອບແນວໃດຕໍ່ຄໍາປະກາດຂອງນັກເທດຕົວແທນທີ່ບໍ່ໄດ້ຖືກຂັດສີຄືກັບສິດຍາພິບານຂອງທ່ານ? ທ່ານຈະຫັນໜ້າເຂົ້າຫຼືຫັນໜ້າອອກຈາກລາວ? ໂດຍບໍ່ຄໍານຶງເຖິງຄໍາຕອບຂອງຄົນອື່ນ. ຜູ້ຟັງແຕ່ລະຄົນຕ້ອງຕອບສນອງຕາມຄວາມເໝາະສົມແລະປະຕິບັດຄວາມຮັບຜິດຊອບຂອງເຂົາເຈົ້າ, ຍ້ອນວ່າເຂົາເຈົ້າຍອມຮັບມັນວ່າມາຈາກພຣະຜູ້ເປັນເຈົ້າ. ພຣະເຈົ້າໄດ້ຮຽກເອີ້ນໃຫ້ບາຣຸກຜູ້ທີ່ຈະເປັນຕົວແທນຢ່າງສັດຊື່ຂອງພຣະອົງດຽວນີ້ແລະປະກາດງ່າຍໆເຣື່ອງຂ່າວດີຕ່າງໆຂອງພຣະເຢຊູຄຣິດໂດຍບໍ່ມີການເວົ້າກະຕຸກກະຕັກຫຼືບໍ່ລຽນບໍ່ໄຫຼ. ຂ່າວປະເສີດຕ້ອງສືບຕໍ່ປະກາດອອກໄປ, ສະນັ້ນຜູ້ທີ່ເຊື່ອທຸກຄົນຄວນຈະມີການກ່າວຂໍ້ຄວາມນັ້ນຊໍ້າແລ້ວຊໍ້າອີກ.

*ມີໃຜທີ່ທ່ານຮູ້ຈັກທີ່ໄດ້ສໍາເລັດວຽກທີ່ຫຍຸ້ງຍາກສໍາລັບບາງຄົນຜູ້ທີ່ເຮັດບໍ່ໄດ້?*

**2. ເຢເຣມີຢາ 36:16-18.**

*16. ຫຼັງຈາກອ່ານຈົບແລ້ວພວກເພິ່ນກໍຫຼຽວເບິ່ງໜ້າກັນດ້ວຍຄວາມຢ້ານແລະເວົ້າຕໍ່ບາຣຸກວ່າ, "ພວກເຮົາຕ້ອງລາຍງານເຣື່ອງນີ້ໃຫ້ກະສັດຊົງຊາບ." 17. ຕໍ່ມາພວກເຈົ້ານາຍໄດ້ຖາມບາຣຸກວ່າ, "ບັດນີ້ຈົ່ງບອກພວກເຮົາວ່າເຈົ້າຂຽນຖ້ອຍຄໍາທັງໝົດນີ້ໄດ້ຢ່າງໃດ? ຂຽນຕາມຄໍາບອກຂອງເຢເຣມີຢາບໍ?" 18. ບາຣຸກໄດ້ຕອບວ່າ, "ເຢເຣມີຢາໄດ້ບອກຖ້ອຍຄໍາເຫຼົ່ານີ້ແກ່ຂ້ານ້ອຍ ຂ້ານ້ອຍຈຶ່ງບັນທຶກໄວ້ໃນເຈັ້ຍມ້ວນດ້ວຍນໍ້າມຶກ."*

ໃນຂນະທີ່ໂບດດໍາເນີນຕໍ່ໄປ ແລະບາຣຸກກໍາລັງເປັນຕົວແທນໃຫ້ເຢເຣມີຢາ, ແຕ່ທຸກຄົນບໍ່ໄດ້ຢູ່ໃນວິຫານ. ພວກທັມມະຈານບາງຄົນໄດ້ນັ່ງຂ້າງຫຼັງຢູ່ໃນຫ້ອງຂອງພວກທັມມະຈານ ທີ່ກະທໍາໜ້າທີ່ຂອງພວກທັມມະຈານຢູ່ (ເຢເຣມີຢາ 36:12). ຂອບພຣະຄຸນພຣະເຈົ້າສໍາລັບມີກາຢາ, ຜູ້ທີ່ຮູ້ວ່າຄົນອື່ນຈໍາເປັນຕ້ອງໄດ້ຍິນຂໍ້ຄວາມ (ຂໍ້ 11), ດັ່ງນັ້ນລາວຈຶ່ງເຊື່ອມຕໍ່ສິ່ງທີ່ຈໍາເປັນ. ມີກາຢາເປັນຕົວແທນຢ່າງສັດຊື່ຂອງບາຣຸກ, ຜູ້ທີ່ໄດ້ເປັນຕົວແທນຢ່າງສັດຊື່ແກ່ເຢເຣມີຢາ; ມີກາຢາກ່າວຊໍ້າທຸກສິ່ງທຸກຢ່າງຂອງຂໍ້ຄວາມທັງໝົດ (ຂໍ້ 13). ໃນຄວາມໝາຍຂອງສມັຍນີ້, ລາວໄດ້ຈົດຂຽນບົດເທສນາໂພສລົງໃນສື່ສັງຄົມຂອງລາວ. ສົ່ງຂໍ້ໃຫຍ່ໃຈຄວາມຊໍ້າແລ້ວຊໍ້າອີກ, ແລະແບ່ງປັນແຫຼ່ງທີ່ມາຂອງຂໍ້ຄວາມກັບຄົນອື່ນ. ເມື່ອພວກທັມມະຈານໄດ້ຍິນຂ່າວສານແລະເຂົ້າໃຈຄວາມຈິງຈັງຂອງເຣື່ອງນັ້ນ, ພວກເຂົາຈຶ່ງຂໍໃຫ້ບາຣຸກມາແລະໃຫ້ຄໍາຢືນຢັນທີ່ພວກເຂົາຕ້ອງການ. ດັ່ງນັ້ນ, ບາຣຸກມາພ້ອມກັບໜັງສືມ້ວນດຽວກັນ; ລາວບໍ່ໄດ້ປັບຂໍ້ຄວາມໃຫ້ເໝາະສົມກັບຜູ້ຊົມທີ່ແຕກຕ່າງກັນ (ຂໍ້ 14). ສິ່ງທີ່ບາຣຸກປ່ຽນແປງແມ່ນວິທີການກ່າວຂອງລາວ; ລາວໄດ້ຖືກຂໍໃຫ້ນັ່ງລົງແລະອ່ານຂໍ້ຄວາມ (ຂໍ້ 15). ພວກທັມມະຈານຢາກ

ໄດ້ຄວາມເຂົ້າໃຈ ແລະຢາກໄດ້ຍິນຂ່າວສານດ້ວຍຕົວເອງ. ທ່ານເຄີຍກັບໄປຟັງຄຳເທສນາເປັນເທື່ອທີສອງບໍ່? ເຈົ້າກັບໄປບັນທຶກໄວ້ບໍ່? ເມື່ອພວກທັມມະຈານໄດ້ຍິນຂ່າວສານ, ການຕອບໂຕ້ກໍເຫັນໄດ້ (ເຈົ້າສາມາດເຫັນມັນຢູ່ເທິງໜ້າຂອງເຂົາເຈົ້າ) ແລະດ້ວຍຄຳເວົ້າ (ເຈົ້າສາມາດໄດ້ຍິນໃນຄຳເວົ້າຂອງເຂົາເຈົ້າ). ເມື່ອເຂົາເຈົ້າຫັນໜ້າໄປຫາກັນດ້ວຍຄວາມຢ້ານກົວ, ເຂົາເຈົ້າຮູ້ວ່າກະສັດຕ້ອງໄດ້ຍິນຂ່າວສານ; ພວກເຂົາເຈົ້າໄດ້ຖືກຕັດສິນໂທດໂດຍຂໍ້ຄວາມ. ນັ້ນແມ່ນວິທີທີ່ພຣະຄຳກະທຳການ. ພຣະຄຳຂອງພຣະເຈົ້າມີອຳນາດ, ຄ້າຍຄືດາບສອງຄົມທີ່ມັນຕັດເຂົ້າໄປໃນຫົວໃຈຂອງພວກເຮົາເພື່ອເຮັດໃຫ້ຮູ້ວ່າໄດ້ກະທຳຜິດ (ເຮັບເຣີ 4:12). ພວກເຂົາຕ້ອງການຄວາມຊັດເຈນກັບຄວາມເຊື່ອໝັ້ນຂອງພວກເຂົາ; ພວກເຂົາເຈົ້າຕ້ອງການຄວາມຮູ້ແຈ້ງເຫັນຈິງເພື່ອສຳຮອງອາລົມຂອງເຂົາເຈົ້າ. ດັ່ງນັ້ນ, ພວກເຂົາຈຶ່ງຖາມບາຣຸກວ່າແມ່ນໃຜ, ອັນໃດ, ແລະ ແນວໃດ (ເຢເຣມີຢາ 36:17). ຈາກນັ້ນ ບາຣຸກໄດ້ແບ່ງປັນກັບເຂົາເຈົ້າເຖິງຂັ້ນຕອນທີ່ເຢເຣມີຢາໄດ້ກ່າວນັ້ນ ລາວໄດ້ຂຽນຂໍ້ຄວາມລົງ (ຂໍ້ 18). ເຢເຣມີຢາສັດຊື່ໃນການຮັບເອົາພຣະຄຳຈາກພຣະຜູ້ເປັນເຈົ້າ ແລະສັ່ງໃຫ້ບາຣຸກ, ຜູ້ທີ່ສັດຊື່ໃນການຂຽນພຣະຄຳລົງ ແລະກ່າວພຣະຄຳຍ້ຳຄືນອີກໃນພຣະວິຫານ. ມີກາຢາສັດຊື່ໃນການໄດ້ຍິນຖ້ອຍຄຳ ແລະແບ່ງປັນຖ້ອຍຄຳກັບຄົນອື່ນໆ. ພວກທັມມະຈານມີຄວາມສັດຊື່ໃນຄວາມຢ້ານກົວຕໍ່ພຣະຄຳ ແລະການເອົາພຣະຄຳໄປສູ່ກະສັດ (ຂໍ້ 20-21). ແຕ່ໜ້າເສັ່ງດາຍ, ເນື່ອງຈາກວ່າກະສັດເຢໂຮຢາກີມບໍ່ມັກສິ່ງທີ່ລາວໄດ້ຍິນ, ລາວຕັດໜັງສືມ້ວນ, ໂຍນມັນເຂົ້າໄປໃນກອງໄຟ, ແລະບໍ່ມີຄວາມເສັ່ງໃຈຕໍ່ສິ່ງທີ່ລາວໄດ້ຍິນຫຼືສິ່ງທີ່ລາວໄດ້ເຮັດ (ຂໍ້ 22-24). ເຖິງແມ່ນວ່າຄົນອື່ນພຍາຍາມຊັກຊວນລາວເຖິງຄວາມຈິງຈັງຂອງຂ່າວສານ, ແຕ່ລາວກໍບໍ່ໄດ້ຍອມຟັງ (ຂໍ້ 25). ກະສັດຍັງສັ່ງໃຫ້ຈັບເຢເຣມີຢາແລະບາຣຸກ. ເຖິງແມ່ນວ່າພວກເຮົາບໍ່ສາມາດຄວບຄຸມການຕອບສນອງຂອງຄົນອື່ນຕໍ່ພຣະຄຳຂອງພຣະເຈົ້າ, ພວກເຮົາສາມາດແບ່ງປັນຂໍ້ຄວາມຢ່າງຖືກຕ້ອງ. ພຣະຄັມພີແມ່ນພຣະຄຳຂອງພຣະເຈົ້າທີ່ປະທານໃຫ້ໂດຍພຣະວິນຍານບໍຣິສຸດ, ຂຽນໂດຍຜູ້ຊາຍ, ເພື່ອໃຫ້ຄົນອື່ນຮູ້ຈັກແລະຕອບສນອງຕໍ່ພຣະເຈົ້າ (2 ເປໂຕ 1:20-21). ຄືກັບທີ່ບາຣຸກບອກວ່າລາວເປັນພຽງຜູ້ສົ່ງຂ່າວແລະຜູ້ຂີດຂຽນ ແລະເຢເຣມີເປັນຜູ້ຂຽນ, ພວກຜູ້ເຊື່ອຕ້ອງບອກໃຫ້ຊັດເຈນວ່າພວກເຮົາເປັນພຽງຜູ້ສົ່ງຂ່າວທີ່ເວົ້າພຣະຄຳຂອງພຣະເຈົ້າ. ພຣະເຈົ້າເປັນຜູ້ຂຽນ, ແລະພຣະອົງສົມຄວນໄດ້ຮັບຄເຣດິດທັງໝົດ.

*ແມ່ນຫຍັງຄືຜົນປໂຍດຂອງການໃຫ້ຄເຣດິດແກ່ຄົນອື່ນ?*

### 3. ເຢເຣມີຢາ 45:1-5.

*1. ຖ້ອຍຄຳຊຶ່ງເຢເຣມີຢາຜູ້ປະກາດພຣະທັມບອກແກ່ບາຣຸກລູກຊາຍເນຣີຢາໃຫ້ລາວຂຽນຖ້ອຍຄຳເຫຼົ່ານີ້ລົງໃນໜັງສືມ້ວນຕາມຄຳບອກຂອງເຢເຣມີຢາໃນປີທີສີ່ແຫ່ງລາຊະການເຢໂຮຢາກີມລາຊະບຸດຂອງໂຢຊີຢາກະສັດແຫ່ງຢູດາວ່າ 2. "ບາຣຸກ ເອີຍພຣະຜູ້ເປັນເຈົ້າພຣະເຈົ້າແຫ່ງອິສຣາເອນກ່າວແກ່ທ່ານດັ່ງນີ້ວ່າ 3. ເຈົ້າວ່າ 'ບັດນີ້ວິບັດແກ່ຂ້ອຍ ເພາະພຣະຜູ້ເປັນເຈົ້າຊົງເພີ່ມຄວາມທຸກເຂົ້າໃສ່ຄວາມຄວາມເສົ້າໂສກຂອງຂ້ອຍ ຂ້ອຍກໍໜັກໜ່ວງດ້ວຍການຮ້ອງຄາງຂອງຕົນເອງ ຂ້ອຍບໍ່ປະສົບຄວາມສະຫງົບເລີຍ' 4. ເຈົ້າຈົ່ງບອກລາວວ່າພຣະຜູ້ເປັນເຈົ້າກ່າວດັ່ງນີ້ວ່າເບິ່ງແມສິ່ງໃດທີ່ເຮົາກໍ່ສ້າງຂຶ້ນເຮົາຈະທຳລາຍລົງແລະສິ່ງໃດທີ່ເຮົາໄດ້ປູກເຮົາຈະຖອນຂຶ້ນຄືແຜ່ນດິນນີ້ທັງໝົດ 5. ແລະເຈົ້າຈະຫາສິ່ງໃຫຍ່ໂຕເພື່ອຕົວເອງບໍ ຢ່າຫາມັນເລີຍ ເພາະພຣະຜູ້ເປັນເຈົ້າກ່າວວ່າ "ເຮົາຈະນຳເຫດຮ້າຍມາເໜືອມະນຸດທັງໝົດ ແຕ່ເຮົາຈະໃຫ້ຊີວິດຂອງເຈົ້າແກ່ເຈົ້າເປັນບຳເໜັດແຫ່ງການສົງຄາມ ໃນທຸກສະຖານທີ່ທີ່ເຈົ້າຈະໄປ"*

ບາຣຸກບໍ່ອາດສາມາດເຊື່ອເລີຍ. ຄຳເຕືອນຂອງພວກທັມມະຈານສຳລັບລາວແລະເຢເຣມີຢາທີ່ຈະໄປລີ້ຊ່ອນຢູ່ແລະບໍ່ບອກຜູ້ໃດເປັນຄຳແນະນຳທີ່ດີເລີດ (ເຢເຣມີຢາ 36:19), ເພາະວ່າບັດນີ້ກະສັດໄດ້ສັ່ງໃຫ້ຈັບພວກເຂົາ (ຂໍ້ 26), ພັຍຂົ່ມຂູ່ແມ່ນຈິງ. ເມື່ອຜູ້ປະກາດພຣະທັມອູຣາຍອາ ໄດ້ເວົ້າອອກມາຕໍ່ຕ້ານນະຄອນເຢຣູຊາເລັມ, ກະສັດເຢໂຮຢາກີມໄດ້ໄລ່ຕິດຕາມລາວໄປຈົນເຖິງປະເທດເອຢິບແລະໄດ້ນຳລາວກັບຄືນມາພຽງແຕ່ເພື່ອປະຫານຊີວິດລາວ (26:20-23), ນີ້ແມ່ນຫຼາຍເກີນໄປສຳລັບບາຣູກ; ລາວບໍ່ເຊື່ອວ່າຕອນນີ້ລາວຢູ່

ໃນ "ລາຍຊື່ຄົນທີ່ຕ້ອງການຫຼາຍທີ່ສຸດ" ເພາະພຽງແຕ່ເວົ້າຂ່າວສານຂອງພຣະເຈົ້າ!

ທ່ານເຄີຍຮູ້ສຶກວ່າບໍ່ໄດ້ຮັບການຍົກຍ້ອງ, ບໍ່ໄດ້ຖືກຮັບຮູ້, ແລະບໍ່ໄດ້ຮັບຄ່າຕອບແທນສໍາລັບວຽກທີ່ທ່ານໄດ້ເຮັດບໍ? ທ່ານເຄີຍຄິດວ່າມັນໄຮ້ປະໂຫຍດ, ໃຊ້ການບໍ່ໄດ້, ຫຼືວ່າບໍ່ມີສິ່ງດີຈະອອກມາຈາກມັນບໍ? ຍິນດີຕ້ອນຮັບເຂົ້າໃນກຸ່ມ. ພວກເຮົາສາມາດເອີ້ນມັນວ່າກຸ່ມຂອງບາຣຸກ. ທ່ານບໍ່ໄດ້ຢູ່ຄົນດຽວ. ບາງຄັ້ງພວກເຮົາໄດ້ໄປສູງແລະເໜືອເກີນກວ່າ, ສໍາລັບສິ່ງທີ່ຮ້າຍແຮງກວ່າເກົ່າເທົ່ານັ້ນ. ບາຣຸກແມ່ນຈະໄດ້ຮັບການຍົກຍ້ອງສໍາລັບການເຊື່ອຟັງທີ່ບໍ່ປະນີປະນອມຂອງລາວ. ລາວຂຽນມັນລົງ; ລາວອ່ານມັນອອກດັງໆ; ລາວອ່ານມັນຄືນໃຫ້ຜູ້ນໍາ; ລາວໄດ້ແລ່ນແລະໄດ້ລີ້. ເຖິງແມ່ນວ່າໃນເວລາທີ່ກະສັດເຢໂຮຍາກິມໄດ້ຕັດແລະຈູດໜັງສືມ້ວນທໍາອິດ (ເຢເຣມີຢາ 36:22-25), ພຣະເຈົ້າໄດ້ໃຫ້ຂໍ້ຄວາມແກ່ເຢເຣມີຢາແລະການມອບໝາຍອື່ນ (ຂໍ້ 27-28). ເຢເຣມີຢາໄດ້ເອົາໜັງສືອີກນຶ່ງມ້ວນແລະເອີ້ນບາຣຸກ, ຜູ້ທີ່ຂຽນທຸກສິ່ງທຸກຢ່າງລົງເປັນຄັ້ງທີສອງ (ຂໍ້ 32). ບາຣຸກເຊື່ອຟັງຢ່າງເຕັມທີ່ແລະບໍ່ໄດ້ເພີ່ມຫຼືລົບຫຍັງຈາກຂໍ້ຄວາມ. ບາຣຸກຢືນຢ່າງບໍ່ຢ້ານກົວ ແລະປະກາດພຣະຄໍາຂອງພຣະເຈົ້າ.

*ເຮົາຮຽນຮູ້ຫຍັງກ່ຽວກັບຄວາມສັດຊື່ຈາກຕົວຢ່າງຂອງບາຣຸກ?*

ບາຣຸກໄດ້ຖືກທ້າທາຍກັບການຕອບໂຕ້ທີ່ບໍ່ໜ້າເຊື່ອຂອງພຣະຜູ້ເປັນເຈົ້າ. ພຣະຜູ້ເປັນເຈົ້າໄດ້ບອກລາວໃຫ້ຢຸດສແວງຫາສິ່ງທີ່ຍິ່ງໃຫຍ່ທີ່ລາວໄດ້ວາງແຜນໄວ້ສໍາລັບຕົວເອງ ເພາະວ່າການພິພາກສາກໍາລັງຈະຖືກຖອກລົງໃສ່ຢູດາ (45:4-5), ເພາະຄວາມສັດຊື່ຂອງລາວ, ພຣະເຈົ້າຈະຮັກສາຊີວິດຂອງລາວ, ເຖິງປານນັ້ນ, ບາຣຸກກໍຍັງທຸບທ້ອຍໃຈ; ປະຊາຊົນໄດ້ປະຕິເສດທີ່ຈະກັບໃຈ. ກະສັດຍັງໄດ້ແກ້ແຄ້ນດ້ວຍຄວາມຮຸນແຮງ. ມັນຊ່າງເປັນການເຕືອນໃຈທີ່ໃຫ້ຊ່ວງເມົາທີ່ວ່າຜູ້ເຊື່ອຈະບໍ່ໄດ້ຮັບການຊົມເຊີຍສເມີໄປ. ນັກເທສນາຈະຖືກເວົ້າໃຫ້ແລະບໍ່ໄດ້ຖືກຂອບໃຈສເມີໄປ. ແມ່ນແຕ່ພຣະເຢຊູໄດ້ຮັບຄວາມທຸກໃນສິ່ງທີ່ພຣະອົງໄດ້ມາກະທໍາ, ເພື່ອຫຼີກເວັ້ນການທຸບທ້ອຍໃຈ, ຢ່າສຸມໃຈໃສ່ການຕອບສນອງຂອງຄົນອື່ນແຕ່ຈົ່ງກ່ຽວກັບຄວາມຮັບຜິດຊອບຂອງທ່ານ. ຈົ່ງສັດຊື່ແລະປະຕິບັດຄວາມຮັບຜິດຊອບເຫຼົ່ານັ້ນ, ເຖິງແມ່ນວ່າຄົນອື່ນຈະບໍ່ຕອບສນອງໃນທາງບວກ. ເພື່ອຫຼີກເວັ້ນການທຸບທ້ອຍໃຈ, ຢ່າສຸມໃຈໃສ່ຜົນໄດ້ຮັບໃນປະຈຸບັນແຕ່ໃຫ້ສຸມໃສ່ລາງວັນໃນອະນາຄົດ. ຈົ່ງສັດຊື່ແລະຮູ້ໄວ້ເຖິດວ່າພຣະຜູ້ເປັນເຈົ້າຂອງການເກັບກ່ຽວມີຄວາມຮັບຜິດຊອບຕໍ່ຜົນທີ່ໄດ້ຮັບ.

*ເຮົາສາມາດເຮັດຫຍັງໄດ້ເພື່ອຍົກຜູ້ທີ່ຮັບໃຊ້ພຣະເຈົ້າຢ່າງງຽບໆໃນເບື້ອງຫຼັງ?*

## ນໍາໃຊ້ໃນຊີວິດ

ພຣະເຈົ້າຈະຕອບແທນການຮັບໃຊ້ສັດຊື່ຂອງທ່ານ. ເລືອກນຶ່ງໃນການນໍາໃຊ້ໃນຊີວິດຕໍ່ໄປນີ້:

**ຂໍຄວາມຊ່ວຍເຫຼືອຈາກພຣະເຈົ້າ.** ຂອບຄຸນພຣະເຈົ້າສໍາລັບສິດທິພິເສດຂອງການໄດ້ຮັບໃຊ້ພຣະອົງ. ຂໍໃຫ້ພຣະອົງຊ່ວຍໃຫ້ທ່ານເຮັດແນວນັ້ນດ້ວຍຄວາມດີເລີດ, ໃນທາງທີ່ນໍາເອົາສະງ່າຣາສີຂອງພຣະອົງແລະຄວາມດີກັບຄົນອື່ນ.

**ກ່າວຂໍ້ຄວາມຊໍ້າອີກ.** ເໝືອນດັ່ງບາຣຸກ, ເລີ່ມຂຽນຂໍ້ຄວາມລົງໂດຍບັນທຶກການອຸທິດຕົນຂອງທ່ານຫຼືບັນທຶກຄໍາເທສນາຂອງສິດຍາພິບານຂອງທ່ານ. ຈາກນັ້ນ, ໂພສຂໍ້ຄວາມອີກທາງອອນໄລນ໌. ແບ່ງປັນລິ້ງ (Link) ນະມັສການໃນສື່ສັງຄົມຂອງທ່ານຖ້າເປັນໄປໄດ້. ສົ່ງຂໍ້ຄວາມບັນທຶກຂອງທ່ານໄປຫາຄອບຄົວຂອງທ່ານ. ໃຫ້ເວົ້າຊໍ້າຄືນຂ່າວປະເສີດຂອງພຣະເຢຊູຄຣິດແບບດີຈິຕອນ.

**ກາຍເປັນຄູສອນ.** ເປັນເງົາຂອງຄູສອນ ແລະຂໍໃຫ້ໄດ້ຮັບການຝຶກໃຫ້ເປັນຕົວແທນຄູສອນໂຮງຮຽນວັນອາທິດຫຼືຄູສອນກຸ່ມນ້ອຍ/ຜູ້ອໍານວຍຄວາມສະດວກ. ພວກເຮົາສາມາດເພີ້ມພູນໂດຍການແຜ່ຂະຫຍາຍຜູ້ນໍາຂອງພວກເຮົາ.

**ອຸປຖັມໂດຍ ລາວຊາວເທີນບັບຕິສສັມພັນ** https://ulsb.org/sunday-school-2/ **ແປໂດຍ PA**